ດ່າວວັນຕ໊ຽບ ★ ສິນລະທວາດ ເສັ່ງສະຫວັດ

# ວັນ ແລະ ຄືນ ໃນປ່າລາວ



ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ

ດ່າວວັນຕ໊ຽນ * ສີມສະຫວາດ ເລັ່ງສະຫວັດ

# ວັນ ແລະ ຄົນ ໃນປ່າລາວ

ແປແລະຮຽບຮຽງ: ຈັນທີ ເດືອນສະຫວັນ

ພິມທີ່ ສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດ
ນະຄອນຫລວງວຽງຈັນ, 2006

* ຄະນະຮັບຜິດຊອບພິມ ແລະຈຳໜ່າຍ : ໜູໄພ່ ກຸນລະວົງ

* ຄະນະຈັດທຳ : ພິມມີ ມິນຕີ
ສີສະໜວາດ ລາຊາສັກ
ບຸນໄຊ ວົງຈັນດີ

* ຄອມພິວເຕີ : ວົງນະຄອນ ໄຊຍະລາດ
ດວງຈັນ ຊຸນລະລິກ
ຄູນມີໄຊ ພຣະສະໜັດ

* ແຕ້ມໜ້າປົກ: ຄຳສຸກ ແກ້ວມິ່ງເມືອງ

ຕາມ ທ.ບ 130 / ພຈ / 06062006
ພິມທີ່ໂຮງພິມ : ສຳນັກພິມ
ຈຳນວນພິມ : 1.000 ຫົວ
ຂະໜາດ : 14 x 20 ຊມ

# ຄຳນຳ

ຊຸມປີ 1968-1970, ເປັນໄລຍະຫົວລ້ຽວຫົວຕໍ່ຂອງການປະຕິວັດ, ຈັກກະພັດອາເມລິກາ ແລະລູກມື ໄດ້ສຸມທຸກກຳລັງແຮງທາງອາກາດ ແລະທາງບົກບຸກໂຈມຕີ ບຽດຍຶດເຂົ້າເຂດທີ່ໝັ້ນຂອງການປະຕິວັດລາວໃນແຂວງຊຽງຂວາງ, ແຂວງຫົວພັນ ແລະ ບັນດາແຂວງທາງພາກເໜືອກໍ່ຄືຖານທີ່ໝັ້ນຂອງການປະຕິວັດຢູ່ທາງພາກໃຕ້ຂອງລາວ.

ນັ້ນແມ່ນການດີ້ນຮົນຄັ້ງສຸດທ້າຍຂອງພວກຈັກກະພັດ ແລະລູກມືເພື່ອຫວັງກອບກູ້ເອົາກຽດສັກສີ ໃນເມື່ອກ້າວເຂົ້າໄປໂຕະເຈລະຈາ ໃນທ່າດີ. ແຕ່ພວກເຂົາຍິ່ງດີ້ນຮົນຫລາຍເທົ່າໃດ ການປະລາໄຊກໍ່ຍິ່ງໜັກໜ່ວງເຂົ້າທຸກມື້, ເຂດປົດປ່ອຍບໍ່ພຽງແຕ່ໄດ້ຮັບການປັບປຸງກໍ່ສ້າງໃນທຸກດ້ານເທົ່ານັ້ນຫາກຍັງໄດ້ຮັບການຂະຫຍາຍອອກໄປໃນທົ່ວປະເທດ. ໃນຂະນະດຽວກັນນັ້ນປະຊາຊົນຜູ້ຮັກຊາດ ທີ່ຢູ່ໃນເຂດຍຶດຄອງຂອງຝ່າຍສັດຕູໄດ້ລຸກຮື້ຂຶ້ນຕໍ່ສູ້ຕ້ານການແຊກແຊງ ຂອງຈັກກະພັດອາເມລິກາ, ກອງກຳລັງປະກອບອາວຸດຝ່າຍຂວາ ໄດ້ຫັນປາຍປືນໃສ່ນາຍຂອງພວກເຂົາ, ກຳມະກອນກໍ່ທຳການຢຸດງານ ແລະ ດຳເນີນການຕໍ່ສູ້ດ້ວຍຮູບການຕ່າງໆຢ່າງຕໍ່ເນື່ອງ.

ເມື່ອສະຖານະການມີຄວາມອຳນວຍຄືແນວນັ້ນ, ທາງສູນກາງພັກຈຶ່ງແຕ່ງຕັ້ງຄະນະເສນາທິການຈຳນວນໜຶ່ງລົງໄປກວດກາ ແລະ

ຈັດຕັ້ງນຳພາຂະບວນການຂອງປະຊາຊົນຢູ່ທາງແຖບທົ່ງພຽງວຽງຈັນ ແລະທົ່ວປະເທດ. ໃນຂະບວນດັ່ງກ່າວ ມີສະຫາຍ ສົມສະຫວາດ ເລັ່ງສະຫວັດ ເຊິ່ງໃນເວລານັ້ນເປັນເລຂາຂອງສະຫາຍເລຂາທິການໃຫຍ່ ໄກສອນ ພົມວິຫານແລະ ສະຫາຍດ່າວວັນຕຽນ ຊ່ວຍຊານຫວຽດນາມ. ພ້ອມຄະນະໄດ້ເດີນທາງໄປປະຕິບັດ ໜ້າທີ່ຢູ່ເຂດແນວຫລັງຂອງສັດຕູ ທີ່ແຂວງວຽງຈັນ ລວມທັງເຂດພູດອຍ, ທົ່ງພຽງ ແລະ ຊານເມືອງນະຄອນຫລວງວຽງຈັນ, ແນໃສ່ສ້າງຮາກຖານປະຕິວັດ ແລະ ຄົ້ນຄວ້າສະພາບເສດຖະກິດ-ສັງຄົມຢູ່ໃນເຂດຢຶດຄອງຂອງສັດຕູ ໃນບໍລິເວນນີ້.

ການລົງໄປປະຕິບັດງານເທື່ອນີ້, ເປັນໄລຍະເວລາທີ່ຝ່າຍກົງກັນຂ້າມ ພວມປ່ວງບ້າດົ້ນຣົນດວ້ຍການສົ່ງກຳລັງອອກໄປສູ່ເຂດຊົນນະບົດ ເພື່ອທຳການກວາດລ້າງ ປາບປາມຈັບກຸມປະຊາຊົນທີ່ເປັນຮາກຖານປະຕິວັດ. ຍ້ອນແນວນັ້ນ ຄະນະຂອງສະຫາຍສົມສະຫວາດ ເລັ່ງສະຫວັດ ຈຶ່ງພົບກັບອຸປະສັກນາງປະການ. ໃນເວລາພົບຄວາມຫຍຸ້ງຍາກທາງດ້ານສະບຽງອາຫານ, ເຄື່ອງນຸ່ງຫົ່ມ, ຂາດຢູກຢາໃນການປິ່ນປົວ ຊ້ຳບໍ່ພໍຢູ່ໃນຄະນະພັດເກີດມີຫນອນບ້ອນໄສ້ (ໄສ້ເສິກ) ທໍລະຍົດຕໍ່ການປະຕິວັດໄປຍອມສັດຕູ ແລະເຮັດໃຫ້ຄະນະເກືອບເອົາຊີວິດບໍ່ລອດ, ແຕ່ດ້ວຍຄວາມເປັນໃຈຂອງປະຊາຊົນພື້ນຖານ, ຍ້ອນມີພະນັກງານອາວຸໂສທີ່ເຄີຍມີບົດ ຮຽນການເຄື່ອນໄຫວຢູ່ແນວຫລັງຂອງສັດຕູເຊັ່ນ: ພໍ່ທິດທາ ເປັນຜູ້ພາທາງ ຈຶ່ງເຮັດໃຫ້ຄະນະເອົາຕົວຫລຸດພົ້ນຈາກມັດຈຸລາດແຫ່ງຄວາມຕາຍ.

ຢູ່ໃນບົດບັນທຶກຄວາມຈຳຂອງສະຫາຍດ່າວ ວັນຕ໊ຽນ ແລະສະຫາຍສົມສະຫວາດ ເລັ່ງສະຫວັດ ເປັນບົດບັນທຶກທີ່ສະແດງໃຫ້ເຫັນເຖິງຄວາມເປັນໃຈສະໜັບສະໜູນຂອງມະຫາຊົນອັນໄພສານ ຢູ່ເຂດແນວຫລັງຂອງສັດຕູຕໍ່ກຳລັງຂອງການປະຕິວັດ, ພວກເຂົາເຈົ້າໄດ້ເຊື່ອງຊ້ອນອາຫານການກິນຊຸບລ້ຽງພະນັກງານດ້ວຍທຸກຣູບການ. ຢູ່ໃນບົດດັ່ງກ່າວໄດ້ຍົກໃຫ້ເຫັນຄວາມເປັນຈິງອັນສວຍສົດງົດງາມຂອງຄວາມສາມັກຄີຮ່ວມເປັນຮ່ວມຕາຍນຳກັນລະຫວ່າງພະນັກງານ ປະຕິວັດລາວ ກັບພະນັກງານ ປະຕິວັດຫວຽດນາມ ກໍ່ຄືປະຊາຊົນຂອງສອງຊາດ ເວລາໃດກໍ່ຄຽງບ່າຄຽງໄລ່ກັນຕໍ່ສູ້ ຕ້ານສັດຕູຕົວດຽວກັນເພື່ອອຸດົມການ ແຫ່ງຄວາມເປັນເອກະລາດ ແລະອິດສະລະພາບ. ບໍ່ວ່າສະໄໝຕໍ່ຕ້ານພວກລ່າເມືອງຂຶ້ນຝຣັ່ງເສດ ກໍ່ຄືສະໄໝຕ້ານການແຊກແຊງຮຸກຮານຂອງຈັກກະພັດອາເມລິກາ ພັກ ແລະລັດຖະບານຫວຽດນາມກໍ່ໄດ້ສົ່ງລູກຫລານ ຂອງຕົນເຂົ້າມາເຮັດໜ້າທີ່ການປະຕິວັດສາກົນຢູ່ປະເທດລາວຕາມຄວາມຮຽກຮ້ອງຕ້ອງການຂອງປະຊາຊົນລາວ. ພວກເພື່ອນຫວຽດນາມເຫລົ່ານັ້ນໄດ້ອຸທິດຊີວິດ ໃນຜືນແຜ່ນດິນລາວເປັນຈຳນວນທີ່ບໍ່ສາມາດຈະນັບເປັນຕົວ ເລກ ຫລືມູນຄ່າໄດ້ ແລະ ລາວເຮົາເອງກໍ່ໄດ້ມີຄຸນງາມຄວາມດີໃຫ້ແກ່ການປະຕິວັດຫວຽດນາມເຊັ່ນ ດຽວກັນ. ດ້ວຍການອະນຸຍາດໃຫ້ເພື່ອນຫວຽດນາມເດີນທັບຜ່ານດິນແດນລາວທັບລົງໄປປົດປ່ອຍພາກໃຕ້ຫວຽດນາມ.

ອ່ານບົດບັນທຶກ "ຄວາມຊົງຈຳໃນປ່າລາວ" ຈະເຮັດໃຫ້ພວກເຮົາເຫັນວ່າ ວຽກງານເຄື່ອນໄຫວຢູ່ເຂດແນວຫລັງຂອງສັດຕູເປັນວຽກທີ່ສ່ຽງເປັນສ່ຽງຕາຍ ຝາກຊີວິດໄວ້ນຳເສັ້ນຜົມ. ໃນໄລຍະການປະຕິວັດຊາດ ປະຊາທິປະໄຕຫລາຍທົດສະວັດທີ່ຜ່ານມາ, ມີພະນັກງານປະຕິວັດນັບເປັນຮ້ອຍ ເປັນພັນຄົນໄດ້ເສຍສະລະຊີວິດ ຢູ່ໃນຂົງເຂດແນວຫລັງຂອງສັດຕູຢ່າງງຽບໆ ຍ້ອນວ່າ ເມື່ອຖືກເສຍລັບ ຫລືຖືກສັດຕູຈັບໄດ້ພວກສະຫາຍຄົງກ່າວຍອມຕາຍດີກວ່າຈະໄຂຄວາມລັບ.

ການທີ່ປະເທດລາວເຮົາມີເອກະລາດ ແລະຄວາມສະຫງົບສຸກຄືສູ່ມື້ນີ້ ແມ່ນເນື່ອງມາຈາກຄວາມເສຍສະລະເລືອດເນື້ອ ແລະຊີວິດຂອງພະນັກງານປະຕິວັດ ແລະປະຊາຊົນລາວສອງຊາດລາວ-ຫວຽດນາມ ຮ່ວມຢູ່ໃນນັ້ນ ມີຢາດເລືອດຂອງເພື່ອນສະຫາຍພະນັກງານທີ່ເຄື່ອນໄຫວຢູ່ເຂດແນວຫລັງຂອງສັດຕູ.

ປະທານ ສະມາຄົມ ນັກປະພັນລາວ



ຈັນທີ ເດືອນສະຫວັນ

# ຮັກກັນໝາຍໝັ້ນຫລາຍສັນພູກໍ່ປີ້ນໄຕ່

---------------

# ບັດອວຍພອນປີໃໝ່ຈາລຶກເຖິງອະດີດ

ເນື່ອງໃນໂອກາດວັດກຸດປີບິງຕີ ( 1996 ), ຂ້າພະເຈົ້າໄດ້ຮັບບັດອວຍພອນປີໃໝ່ ຈາກເພື່ອນລາວຄົນໜຶ່ງ ເຂົາຄືສະຫາຍ ສົມສະຫວາດ ເລັ່ງສະຫວັດ ຜູ້ຊຶ່ງເຄີຍຮ່ວມທາງໄປປະຕິບັດໜ້າທີ່ໄລຍະຍາວຢູ່ເຂດແນວຫລັງຂອງສັດຕູທີ່ວຽງຈັນຊຸມປີ 1968 ຫາ1970 ເຫດ ການດັ່ງກ່າວເຮັດໃຫ້ຂ້າພະເຈົ້າບໍ່ມີວັນຫລົງລືມ.

ບັດອວຍພອນປີໃໝ່ທີ່ສະຫາຍ ສົມຫວາດ ຝາກໃຫ້ນັ້ນ ເປັນບັດທີ່ພິມດ້ວຍ 3 ພາສາ, ລາວ, ຝຣັ່ງ ແລະອັງກິດ ອັນເປັນບັດອວຍພອນສຳລັບລັດຖະມົນຕີ ກະຊວງການຕ່າງປະເທດຂອງລາວຕໍ່ເພື່ອນມິດທົ່ວໄປ ເມື່ອຂ້າພະເຈົ້າໄດ້ຮັບບັດດັ່ງກ່າວກໍ່ຖືວ່າເປັນໂຊກວາດສະໜາ ແລະເປັນກຽດຢ່າງຍິ່ງ.

ເຮັດໃຫ້ຂ້າພະເຈົ້າ ມີຄວາມສະອື້ນຕື້ນຕັນໃຈຕໍ່ຕົວອັກສອນບໍ່ເທົ່າໃດແຖວ ຊຶ່ງສະ ຫາຍຂຽນເປັນພາສາຫວຽດດັ່ງນີ້ :

" ອ້າຍຕຸ້ງນທີ່ຮັກແພງ "

ເນື່ອງໃນໂອກາດປີໃໝ່ ອວຍພອນໃຫ້ອ້າຍເອື້ອຍ ແລະພວກຫລານຈົ່ງມີສຸຂະພາບເຂັ້ມແຂງ ຄອບຄົວມີຄວາມສະຫງົບສຸກ, ນ້ອງເອງເວລາໃດກໍ່ຄິດຮອດຄິດເຖິງອ້າຍເອື້ອຍ ຄິດເຖິງຊຸມມື້ທີ່ສອງອ້າຍນ້ອງພວກເຮົາຮ່ວມກັນເຄື່ອນໄຫວຢູ່ແນວຫລັງສັດຕູທີ່ວຽງຈັນ.

ຫວັງເປັນຢ່າງຍິ່ງວ່າ ຈະໄດ້ພົບອ້າຍອີກເທື່ອໃໝ່ "

ອ່ານແຖວອັກສອນອວຍພອນ ຄຳເວົ້າທີ່ເຕັມໄປດ້ວຍຄວາມຮັກແພງຖານອ້າຍນ້ອງ ເພື່ອນສະຫາຍດັ່ງກ່າວ ເຮັດໃຫ້ຂ້າພະເຈົ້າບໍ່ອາດສະກັດກັ້ນຢາດນ້ຳຕາແຫ່ງຄວາມອັກອັ້ນ ຕັນໃຈ ຊຶ່ງມັນເປັນຄວາມຮັກທີ່ກັ່ນກອງອອກຈາກຫມາກຫົວໃຈຂອງເພື່ອນສະຫາຍລາວທີ່ມີຕໍ່ຄົນຫວຽດນາມ ແລະປະເທດຫວຽດນາມອ້າຍນ້ອງ.

ຄ່ຳຄືນຂອງມື້ເນົາທີ່ນະຄອນຫລວງຮ່າໂນ້ຍບໍ່ມີສຽງຈູດໝາກໂພກ, ຂ້າພະເຈົ້າບໍ່ຫລັບບໍ່ນອນ, ມືຂອງຂ້າພະເຈົ້າຈັບປາກກາ ເພື່ອຂຽນຈົດຫມາຍຝາກໃຫ້ສະຫາຍ ສົມສະຫວາດ ເລັ່ງສະຫວັດ, ໃນຈົດຫມາຍ ຂ້າພະເຈົ້າໄດ້ທວນຄືນເຫດການຕ່າງໆ ຂອງອະດີດທີ່ສອງຄົນເຄີຍຜ່ານຜ່າ, ໃນຈົດຫມາຍຍັງໄດ້ຝາກຄວາມຢ້ຽມຢາມຖາມຂ່າວເຖິງເພື່ອນຮ່ວມງານ ໃນຄາວຕໍ່ສູ້ກູ້ຊາດຮ່ວມຢູ່ໃນຂຸມຄອງດຽວກັນ ເພື່ອພາລະກິດປົດປ່ອຍຊາດຂອງສອງປະເທດໃນຈົດຫມາຍຂ້າພະເຈົ້າມຸ່ງຫວັງວ່າມື້ຫນຶ່ງຂ້າງຫນ້າ ພວກເຮົາຍັງຈະໄດ້ພົບກັນເພື່ອທວນຄືນຊີວິດໃນອະດີດ...

ຄວາມມຸ່ງຫວັງແມ່ນແນວນັ້ນແທ້, ແຕ່ຂ້າພະເຈົ້າຄິດວ່າການທີ່ຈະພົບກັນນັ້ນ ມັນບໍ່ແມ່ນເລື່ອງງ່າຍດາຍ, ຈະບໍ່ເຫມືອນສະໄຫມສົງຄາມ ພໍແຕ່ມີຄຳສັ່ງຂອງຂັ້ນເທິງ ທຸກຄົນເອົາຖົງພາຍໃສ່ຫລັງແລ້ວຕ່າງກໍ່ພາກັນອອກເດີນທາງຮ່ວມກັນ, ແຕ່ໃນປະຈຸບັນ, ຂ້າພະເຈົ້າເອງພົ້ນກະສຽນອາຍຸ ແລະອອກພັກຜ່ອນກິນບຳນານ ແລະກໍ່ອອກພັກຜ່ອນຄ້ອມພໍດີໃນຂະນະທີ່ຝ່າຍລາວ ໄດ້ເຊີນຊ່ຽວຊານຫວຽດນາມໄປຢ້ຽມຢາມລາວ, ພວກທີ່ຖືກເຊີນນັ້ນ ຊ້ຳພັດແມ່ນຊ່ຽວຊານດ້ານການທະຫານ ສ່ວນຂ້າພະເຈົ້າພັດໂຍກຍ້າຍຈາກຝ່າຍ

ທະຫານໄປປະຕິບັດງານຝ່າຍພົນລະເຮືອນຍ້ອນແນວນັ້ນ ການທີ່ຈະໄປຢາມລາວຢາມເພື່ອນສະຫາຍເກົ່ານັ້ນຄືງຈະບໍ່ມີຫວັງເສຍແລ້ວ.

ເມື່ອຫວນຄືນເຖິງຊຸມປີ 1983 ຫາ 1990, ຂ້າພະເຈົ້າໄດ້ຖືກທາງການແຕ່ງຕັ້ງໃຫ້ໄປວຽງຈັນ ເພື່ອຮ່ວມມືກັບຝ່າຍລາວຮຽບຮຽງປຶ້ມປະຫວັດສາດຂອງລາວ, ຄົ້ນຄ້ວາກ່ຽວກັບປະຫວັດຂອງພັກປະຊາຊົນປະຕິວັດລາວ, ແລະຮ່ວມກັບຝ່າຍລາວຂຽນປຶ້ມກ່ຽວກັບຊົນເຜົ່າວິທະຍາຂອງລາວ, ໃນເວລານັ້ນ ສະຫາຍ ພູມີ ວົງວິຈິດ ຜູ້ວ່າການປະທານປະເທດ ສ.ປ.ປ. ລາວ, ກຳມະການກົມການເມືອງສູນກາງພັກ ຮັບຜິດຊອບການຊີ້ນຳບັນດາໂຄງການຄົ້ນຄ້ວາວິທະຍາສາດ ສັງຄົມ ໄດ້ກ່າວວ່າ ເມື່ອໃດຫາກຂຽນສຳເລັດແລ້ວຈະເຊີນໄປຢ້ຽມຢາມທ້ອງຖິ່ນຕ່າງໆ. ແຕ່ແລ້ວ, ທ່ານພູມີ ວົງວິຈິດໄດ້ຈາກໂລກນີ້ໄປກ່ອນ ຈຶ່ງເຮັດໃຫ້ຄຳສັນຍາຂອງທ່ານບໍ່ອາດປະຕິບັດໄດ້.

ສ່ວນສະຫາຍ ສົມສະຫວາດ ເລັ່ງສະຫັວດ ຊຶ່ງປັດຈຸບັນຍັງຢູ່ໃນຖານະເປັນກຳມະການສູນກາງພັກ ລັດຖະມົນຕີວ່າການກະຊວງການຕ່າງປະເທດ, ຫົວໜ້າກຳມາທິການ ການຕ່າງປະເທດຂອງສູນກາງພັກ, ຖ້າເມື່ອໃດທ່ານຫາກເດີນທາງໄປຫວຽດນາມ ພາລະໜ້າທີ່ຕົ້ນຕໍຂອງທ່ານຈະເປັນລັກສະນະທາງການຫລາຍກວ່າຈະເອົາເວລາຫວ່າງຢູ່ໃສເພື່ອໄປຢ້ຽມຢາມເພື່ອນເກົ່າ ນັ້ນຍັງບໍ່ເວົ້າເຖິງບັນດາຫລັກການຕ່າງໆ.

ແຕ່ແລ້ວ, ຂ້າພະເຈົ້າບໍ່ນຶກບໍ່ຝັນຈັກດີ້ວ່າ ຄ່ຳຄືນນື້ໜຶ່ງຂອງເດືອນມີນາ 1996 ສະ ຫາຍສົມສະຫວາດ ພ້ອມພັນລະຍາ ແລະລູກຊາຍຂອງເພິ່ນໄດ້ໄປເຮືອນ ຂ້າພະເຈົ້າ ຂ້າພະເຈົ້າພ້ອມຄອບ

ຄືວບໍ່ຊ່າງຈະພັນລະນາຕໍ່ຄວາມພາກພູມໃຈຕໍ່ການມີໜ້າຂອງເພື່ອນເກົ່າ ທີ່ມາປາກົດຢູ່ໃນເຮືອນຂອງຕົນຢ່າງບັງເອີນຄືແນວນີ້.

ພັນລະຍາຂອງສະຫາຍ ສົມສະຫວາດໄດ້ມອບຜ້າລາຍດອກເພື່ອຕັດເສື້ອໃຫ້ພັນລະຍາຂ້າພະເຈົ້າ, ນາງບໍ່ຮູ້ພາສາຫວຽດນາມໄດ້ແຕ່ຫົວຍິ້ມ ຮອຍຍິ້ມໄດ້ສະແດງອອກໃຫ້ເຫັນເຖິງຄວາມສະໜິດຮັກແພງ, ພັນລະຍາຂ້າພະເຈົ້າອັກອັ້ນຕັນໃຈ ແລະເຫັນອົກເຫັນໃຈຢ່າງຍິ່ງ. ເຂົາທັງສອງກອດຊົມກັນເໝືອນດັ່ງເຄີຍເປັນພີ່ນ້ອງກັນມາດົນນານແສນນານແລ້ວ ມື້ນີ້ໄດ້ກັບຄືນມາພົບໜ້າພໍ້ຕາກັນອີກເທື່ອໃໝ່.

ສະຫາຍ ສົມສະຫວາດ ກ່າວຕໍ່ພັນລະຍາຂ້າພະເຈົ້າວ່າ :

" ເອື້ອຍເປັນພະນັກງານຫວຽດນາມຜູ້ໜຶ່ງ ທີ່ມີວິລະກຳຢ່າງໃຫຍ່ຫລວງຕໍ່ການປະຕິ ວັດລາວ, ເອື້ອຍບໍ່ເຄີຍໄປເຄື່ອນໄຫວຢູ່ເມືອງລາວ ແຕ່ເອື້ອຍຊ້ຳພັດແທນຜົວລ້ຽງລູກ 3 ຄົນ, ຮັບປະກັນການງານທຸກຢ່າງຢູ່ທາງແນວຫລັງ ເພື່ອເຮັດໃຫ້ອ້າຍຕ່ຽນມີຄວາມສະຫງົບອຸ່ນອ່ຽນໄປເຮັດວຽກສາກົນຢູ່ທາງເມືອງລາວ, ຂໍສະແດງຄວາມມີນຳ້ໃຈທີ່ຍິ່ງໃຫຍ່ຂອງເອື້ອຍ ຂອບໃຈພວກຫລາຍ ! ".

ສະຫາຍ ສົມສະຫວາດໄດ້ມອບຂອງຂັວນຊິ້ນໜຶ່ງທີ່ພິເສດຫລາຍ ໃຫ້ແກ່ຂ້າພະເຈົ້າ, ເປັນແອບເຂົ້າທີ່ສານດ້ວຍໄມ້ໄລ່ ຊຶ່ງຄົນລາວຖືວ່າ ໜໍ່ໄມ້ໄລ່ເປັນໜໍ່ທີ່ແຊບທີ່ສຸດແລະນິຍົມກັນກິນ, ເປັນຂອງຕ້ອນທີ່ມີຄວາມໝາຍ ເຮັດໃຫ້ລະລຶກເຖິງບຸນຄຸນຂອງປະຊາຊົນຊາວວຽງຈັນ ເຖິງແມ່ນວ່າຈະຢູ່ແນວຫລັງຂອງສັດຕູ ແຕ່ຊາວບ້ານໄດ້ຊຸບລ້ຽງ ແລະປ້ອງກັນພວກເຮົາໃນສະໄໝທົວລ້ຽວທົວຕໍ່ຂອງບັ້ນກວາດລ້າງຢ່າງໃຫຍ່ຂອງສັດຕູ ປະຊາຊົນພື້ນຖານໄດ້ຊ່ວຍ

ເຫລືອພວກເຮົາສຳເລັດໃນການປະຕິບັດໜ້າທີ່.

ລູກຊາຍຂອງສະຫາຍສົມສະຫວາດ ປັດຈຸບັນພວມສຶກສາຮ່ຳຮຽນຢູ່ປະເທດໄທ, ເປັນເທື່ອທຳອິດທີ່ຫລານໄປເຫັນປະເທດຫວຽດນາມ ບໍ່ທັນຮູ້ພາສາຫວຽດ ຫລານສົນທະນາກັບຂ້າພະເຈົ້າເປັນພາສາລາວ.

" ໃນສະໄໝທີ່ລຸງຮ່ວມເຄື່ອນໄຫວກັບພໍ່ຫລານນັ້ນ ຫລານຍັງບໍ່ທັນເກີດເທື່ອ ຫລານມີຄວາມພາກພູມໃຈເປັນຢ່າງຍິ່ງຕໍ່ຄວາມຮັກແພງລະຫວ່າງລຸງກັບພໍ່ຫລານ ! "

ພັນລະຍາຂອງສະຫາຍສົມສະຫວາດກ່າວວ່າ :

" ສາມີຂອງນ້ອງໄດ້ເລົ່າກ່ຽວກັບການເຄື່ອນໄຫວ ຂອງພວກອ້າຍໃນຄາວຕໍ່ສູ້ກູ້ຊາດຢູ່ໃນດົງ ປ່າເຂດແນວຫລັງຂອງສັດຕູທີ່ວຽງຈັນ ມື້ນີ້ໄດ້ກັບຄືນມາພໍ້ໜ້າເຫັນຕາ ຈັ່ງແມ່ນນ້ອງດີໃຈຫລາຍ ! "

ຂ້າພະເຈົ້າຂົນເອົາເຫລົ້າເອົາເບຍອອກມາ ເພື່ອຊຸມແຊວກັນໃນມື້ບຸນທີ່ໄດ້ມາພົບພໍ້ກັນ ແຕ່ແລ້ວກໍ່ຕ້ອງຜິດຫວັງ ເພາະທັງຝ່າຍລາວ ແລະຫວຽດບໍ່ມີໃຜຮູ້ດື່ມເຫລົ້າດື່ມເບຍ ມີແຕ່ດື່ມນ້ຳຮ້ອນ ແລະກິນໝາກໄມ້ ການກິນຄືແນວນັ້ນ ເຮັດໃຫ້ພວກເຮົາລະລຶກ ຄືນເຖິງຊີວິດໃນຄາວຢູ່ເຂດແນວຫລັງຂອງສັດຕູ ພວກເຮົາມີແຕ່ດື່ມນ້ຳຕົ້ມແລະເຂົ້າໜຽວທີ່ຊາວບ້ານເຊື້ອງຊ້ອນມາໃຫ້ ແລະຮ່ວມກັນແຂວນອູ່ນອນ... ເຫດການດັ່ງກ່າວເຮັດໃຫ້ຂ້າ ພະເຈົ້າຄິດເຖິງຄຳສຸພາສິດລາວທີ່ວ່າ " ອົດທົນກິນຊີ້ງ ກິນຂ່າ ດື່ມນ້ຳທ່າຕາງນ້ຳຕານ ບາດແລ້ວຊິໄດ້ກິນຂອງແຊບຂອງຫວານ "

ນັ້ນລະ, ຄຸນຄ່າຂອງຄວາມຮັກຄວາມແພງ, ເປັນຄວາມຮັກຄວາມແພງທີ່ກັ່ນກອງອອກມາຈາກແປວໄຟແຫ່ງສົງຄາມກູ້ຊາດ ກູ້

ເອກະລາດ ເປັນຄວາມຮັກແພງທີ່ມາຈາກນ້ຳເຫື່ອ, ນ້ຳໄຄຈາກ ຄວາມທຸກຄວາມໂສກ ແລ້ວຈຶ່ງເກີດມີຄວາມຊື່ນຄືມື້ນີ້, ເຖິງຈະຮັກກັນ ໜມາຍໝັ້ນ ຫລາຍສັນພູກໍ່ປີນໄຕ່ ແຕ່ເມື່ອເຖິງຄາວອຳລາຄາຈາກ ພວກເຮົາກໍ່ຕ້ອງລາຈາກກັນໃນທ່າມກາງແຫ່ງຄວາມອາໄອອາວອນ, ຂ້າພະເຈົ້າ ແລະຄອບຄົວໄດ້ອອກສົ່ງພວກເພິ່ນຮອດປະຕູລົດ ພວກເຮົາກອດຈູບກັນຢ່າງແໜ້ນ ແລະສະຫາຍ ສົມສະຫວາດຝາກຄວາມຫວັງວ່າ ພວກເຮົາຍັງຈະໄດ້ພົບກັນເທື່ອໃໝ່ !

# ຊຸມມື້ຢູ່ຫວຽດນາມ

ມັນຈະເປັນສິ່ງທີ່ຍັງບໍ່ພຽງພໍ ຫາກບໍ່ກ່າວເຖິງຊຸມມື້ທີ່ຮ່ວມວຽກນຳກັນຢູ່ປະເທດຫວຽດ ນາມອັນເປັນບ່ອນທີ່ສະຫາຍ ສົມສະຫວາດ ເລັ່ງສະຫວັດໄດ້ຮ່ວມເຮັດວຽກກັບພວກເຮົາ ກ່ຽວກັບການສັງລວມສະຖານະການດ້ານສັງຄົມ ແລະບັນຫາຊົນເຜົ່າຢູ່ລາວ ຫລັງຈາກໄດ້ພ້ອມພາກັນໄປປະຕິບັດງານເພື່ອຄົ້ນຄ້ວາເປັນເວລາ 3 ຄັ້ງຢູ່ໃນ 8 ແຂວງໃນປີ 1964 ເຖິງປີ 1968 ຢູ່ລາວດ້ວຍຈຸດພິເສດສະພາບໃນຍາມນັ້ນທຸກເທື່ອທີ່ໄປປະຕິບັດງານແຕ່ລະຄັ້ງ ພວກເຮົາຕ້ອງກັບຄືນວຽງໄຊ ເພື່ອລາຍງານຫມາກຜົນຂອງວຽກໃຫ້ຄະນະປະຈຳສູນກາງຊາບ. ປີ 1968 ອາເມລິກາຍິງຖະຫລົ່ມນະຄອນຫລວງຮ່າໂນ້ຍຢ່າງຫນັກຫນ່ວງ ພວກເຮົາຕ້ອງປ່ຽນສະຖານທີ່ເຮັດວຽກຢູ່ເຂດປອດໄພ ທີ່ຕາແສງກາດບັງ ເມືອງຮວ່າຍດຶກ ແຂວງຮ່າໄຕ.

ກາດບັງ ເປັນຕາແສງຫນຶ່ງທີ່ຕັ້ງຢູ່ຝັ່ງແມ່ນ້ຳໄດ, ນ້ຳສາຍນີ້ຈະແຫ້ງແລ້ງໃນລະດູຮ້ອນ ແຕ່ພໍເຖິງລະດູຝົນ ນ້ຳແດງ ແລະນ້ຳສາຍອື່ນໆຈະໄຫລໂຮມເຂົ້າກັນ .ເຮັດໃຫ້ຂົງເຂດດັ່ງກ່າວເປັນສາຍນ້ຳແກ່ງກວ້າງຂວາງສຸດສາຍຕາ.

ໃນເວລາທີ່ພວກເຮົາໄປຢູ່ໃຫມ່ໆນັ້ນນ້ຳສາຍນີ້ແຫ້ງ, ສອງຟາກຝັ່ງຈະເຕັມໄປດ້ວຍພືດພັນສີຂຽວອຸ່ມທຸ່ມ, ມີຕົ້ນໄມ້ໄຜ່ສີຂຽວປະດັບໃຫ້ຫມູ່ບ້ານເປັນຈຸ້ມໆ, ເຮືອນຂອງຊາວບ້ານມຸງດ້ວຍໃບອ້ອຍ. ຕາມທຳມະດາໃນຍາມທີ່ບໍ່ມີສຽງເຮືອບິນຖິ້ມລະເບີດບໍ່ມີສຽງປືນປ້ອງກັນອາກາດສະຍານຍິງໂຕ້ຕອບເຮືອບິນຂອງຂ້າເສິກໃນສະຖານ

ທີ່ແຫ່ງນີ້ຈະກາຍເປັນດິນແດນແຫ່ງຄວາມສະຫງົບງຽບ.

ບັນດາເຈົ້າຂອງເຮືອນທີ່ພວກເຮົາໄປພັກອາໃສນັ້ນ ລ້ວນແຕ່ເປັນຄົນໃຈດີກັນທັງນັ້ນ, ພວກຊາວບ້ານໃຜໆກໍ່ຮູ້ວ່າ ຮ່ວມຢູ່ໃນຫມູ່ພະນັກງານທີ່ອົບພະຍົບມາອາໃສຢູ່ນຳນັ້ນ ມີທັງເພື່ອນສະຫາຍລາວ. ຊາວບ້ານໄດ້ຮ່ວມກັນຊ່ວຍຂຸດຂຸມຫລົບໄພ, ພວກເຂົາໄດ້ຊ່ວຍຕັດໄມ້ໄຜ່ ເພື່ອເປັນຄານປົກຫຸ້ມເປັນຕົວອັກສອນ A. ໃນໂມງພັກຜ່ອນ ຊາວບ້ານກໍ່ຄືເຈົ້າຂອງເຮືອນຕ່າງກໍ່ນຳເອົາມັນດ້າງ ແລະຫມາກຖົ່ວດິນທີ່ຕົ້ມສຸກແລ້ວມາໃຫ້ພວກເຮົາກິນຫລິ້ນ :

" ພວກອາວ ພວກລຸງລອງຊີມເບິ່ງ ພືດພັນຂອງຊາວສວນຫວຽດນາມຈະເຫມືອນກັບພືດພັນຂອງເມືອງລາວ ຫລືບໍ່ ? ".

ໄປລີ້ໄພຢູ່ເຂດຊົນນະບົດ ມັນກໍ່ມີອັນມ່ວນຂອງມັນ, ພໍຕົກຍາມອັດສະດົງ ພວກເຮົາຍ່າງລົງໄປຫາແມ່ນ້ຳເພື່ອອາບ, ພວກເຮົາທັງອາບ ທັງເອົາຕີນຄົວດເຂ່ຍເອົາຈຳພວກຫອຍກີ້ ທີ່ໃຫຍ່ສ່ຳຝາມືຖ້າໄດ້ຮອດ 7 ຫາແປດໂຕຖືວ່າໄດ້ຫມໍ້ແກງສົ້ມຫມໍ້ຫນຶ່ງ, ເມື່ອກິນແລ້ວຈະເຮັດໃຫ້ເຢັນສະບາຍ.

ຢູ່ກາດບັງ, ພໍຕົກຄ່ຳມືດ ຈຳພວກຂຽດຕະປາດຕ່າງກໍ່ສົ່ງສຽງແຂ່ງກັນຮ້ອງຕາມບຶງຫນອງ, ພວກເພື່ອນລາວຕ່າງກໍ່ແປກປະຫລາດຂຽດຕະປາດຫລາຍປານນັ້ນ ແຕ່ບໍ່ເຫັນຊາວບ້ານໄປຈັບຂາຍ ຫາກມີແຕ່ໄປກ້ານເອົາຈຳພວກກົບເທົ່ານັ້ນ. ຕໍ່ຄຳຂັດຂ້ອງດັ່ງກ່າວ, ທ່ານເຈິ່ມຜູ້ເປັນເຈົ້າຂອງເຮືອນຫົວ ແລະເວົ້າວ່າ.

" ພວກຂ້ອຍສະຫງວນຮັກສາຂຽດຕະປາດໄວ້ ເພື່ອໃຫ້ມັນບັນເລງດົນຕີໃຫ້ຊາວບ້ານຟັງໃນຍາມຄ່ຳຄືນ ".

ມີເທື່ອຫນຶ່ງ, ລຸງຕົ້ນພະນັກງານທີ່ອາວຸໂສກວ່າຫມູ່ຂອງຝ່າຍ

ລາວໄດ້ເວົ້າຫລິ້ນແກມ ອີ່ຫລີວ່າ :

"ພວກມັນບັນເລງຫມົດຄືນຊອດແຈ້ງ ເຮັດໃຫ້ພວກເຮົານອນບໍ່ຫລັບ ຢາກຊຶ້ນໍາຊາວບ້ານເຂົາຈະຂາຍ ຫລືບໍ່ ? "

ທ່ານເຈີມຕອບວ່າ :

"ອັນວ່າຂາຍນັ້ນ ຄືງຈະບໍ່ຂາຍ ຖ້າພວກອາວ ພວກລຸງຫາກສາມາດຈັບມັນໄດ້ ແມ່ນຈະໃຫ້ລ້າ ບໍ່ເອົາເງິນ ".

ເປັນອັນວ່າຄືນຂອງມື້ນັ້ນ ພວກເຮົາພາກັນໄປຈັບຊຽດຕະປາດ ໂດຍແມ່ນທ່ານເຈີມເປັນຜູ້ພາທາງ, ໃນຄະນະ ສະຫາຍສິມສະຫວາດ ເປັນຄົນຕາໄວກວ່າເພິ່ນ, ພວກຊຽດຕະ ປາດທີ່ລີ້ຢູ່ຕາມພຸ່ມຫຍ້າແລະ ຈອກແມນແຕ່ຫົວອອກມາໜ້ອຍດຽວ ແຕ່ສະຫາຍກໍ່ຍັງສາ ມາດແນມເຫັນ ແລະຈັບໄດ້, ແສງຂອງບັ້ງໄຟສາຍເຍືອງໃສ່ຕາຂອງພວກ ຊຽດ ພວກມັນເຮັດຕາໂຫລກໂລ້ ມີລັກສະນະທ້າທາຍຈີນຮອດຍາມຕົກຢູ່ໃນອຶ້ງມື ຈຶ່ງຄ່ອຍໃຊ້ 4 ຕີນຢັນ, ທ່ານເຈີມ ມັກຈະຍອກໄຍ ສະຫາຍ ສິມສະຫວາດວ່າ :

"ສະຫາຍສິມສະຫວາດເກັ່ງທາງດ້ານຈັບຊຽດຕະປາດ ແຕ່ບໍ່ເກັ່ງຈັບກົບ ສະຫາຍຢາກໄປງົມກົບບໍ່ ຂ້ອຍຈະພາສະຫາຍໄປ "

ທຸກຄົນໄດ້ຍິນການຍອກໄຍດັ່ງກ່າວ ຕ່າງກໍ່ພາກັນຫົວຂຶ້ນຢ່າງພໍອົກພໍໃຈ.

ທ່ານ ເຈີມພາພວກເຮົາໄປເລາະຈັບຊຽດຕະປາດ ຕາມຫນອງບຶງຂອງຊາວບ້ານ, ປາກົດວ່າປະຕູຮົ້ວເຂົ້າເຮືອນ ປ່ອງຢ້ຽມທຸກປ່ອງລ້ວນແຕ່ໄຂຈ່າງປ່າງ, ມີບາງຄັ້ງພວກເຮົາຍ່າງກາຍເຮືອນຂອງຊາວບ້ານພວກເຂົາສ່ອງໄຟສາຍມາບພຸ້ນມາບພີ້ ຝ່າຍເຈົ້າຂອງເຮືອນສົ່ງສຽງອອກມາຖາມວ່າ.

" ແມ່ນໃຜເຂົ້າເດີ່ນບ້ານ ມີວຽກຫຍັງ ? " ພວກເຮົາພາກັນຢຸດ ທ່ານເຈີມເປັນຜູ້ຕອບ ຕາງ:

" ພໍ່ໃຫຍ່ເດີ້ນີ້ ຫົວໜ້າພວມພາທະຫານໄປເລາະຈັບພວກກໍ່ຄວາມບໍ່ສະຫງົບ ເພາະມັນພາກັນຮ້ອງຈົນນອນບໍ່ຫລັບ "

ເນື່ອງຈາກວ່າ ທ່ານເຈີມຕາລ່ຽວເບື້ອງໜຶ່ງ ເພາະສະນັ້ນຊາວບ້ານຈະຮຽກເຂົາວ່າທ່ານຫົວໜ້າຕາລ່ຽວ, ເມື່ອຊາວບ້ານຮູ້ວ່າພວກເຮົາພາອ້າຍນ້ອງລາວໄປຊອກຈັບຊຽດຕະປາດ ເຈົ້າຂອງເຮືອນຕ່າງກໍ່ອອກມາເຊື້ອເຊີນໃຫ້ເຂົ້າໄປແວ່ຢາມ ພ້ອມທັງຖອກນ້ຳຊາຊຽວໃຫ້ດື່ມ, ການໄປຊອກຈັບຊຽດຕະປາດ ໄດ້ກາຍເປັນການແລກປ່ຽນທາງດ້ານວັດທະ ນະທຳແລະຮີດຄອງປະເພນີລະຫວ່າງ 2 ຊາດເຮັດໃຫ້ຄວາມຮັກແພງສະໜິດສະໜົມລະຫວ່າງ ລາວ - ຫວຽດຍິ່ງທະວີຄູນຂຶ້ນໃນໝູ່ບ້ານດັ່ງກ່າວ, ຊາວບ້ານຕ່າງກໍ່ຍົກຍໍປັ້ນວ່າຄົນລາວເປັນຄົນດຸໝັ່ນ ແລະມັກມ່ວນ. ຜ່ານການຢູ່ຮ່ວມກັບຊາວຫວຽດນາມໄລຍະໜຶ່ງເຮັດໃຫ້ສະ ຫາຍລາວຮູ້ພາສາຫວຽດນາມໄດ້ດີພໍສົມຄວນ, ທຸກເທື່ອທີ່ສະຫາຍສົມສະຫວາດຍ່າງກາຍເຮືອນຂອງຊາວບ້ານ, ພວກເດັກມັກຈະເຊື້ອເຊີນ :

" ເຊີນອ້າຍຫວາດເຂົ້າມາຢາມແດ່ດູ "

" ເຮືອນນ້ອງມີອອ້ຍຫວານໃດ "

" ເຮືອນນ້ອງມີໝາກຜຸກ ( ສົ້ມໂອ ) ອ້າຍຫວາດມັກກິນສົ້ມໝາກຜຸກບໍ ? "

ສົມສະຫວາດມີການໄກ້ສິດ ກັບພວກເດັກເປັນພິເສດພວກເດັກຈຶ່ງສະໜິດສະໜົມ ຮັກໄຄ່ເພິ່ນຫລາຍ ແລະຕອບຄືນວ່າ:

" ເຮືອນນ້ອງມີພີ່ເອື້ອຍບໍ ? "

ເຮືອນຂອງນາງເທີມ ມີໝາກຜຸກຫວານ, ຂ້າພະເຈົ້າພາສົມສະຫວາດເຂົ້າໄປເພື່ອຈະຖາມຊື້ ຜູ້ເປັນເມຍບອກໃຫ້ລູກສາວອອກໄປປິດໝາກຜຸກ. ເຈົ້າຂອງເຮືອນໄດ້ປອກ ໝາກໄມ້ໃຫ້ແຂກກິນຢ່າງເຕັມອີ່ມ ແຕ່ປະຕິເສດບໍ່ຍອມເອົາເງິນ, ຄວາມເອື້ອເຟື້ອໃຈດີດັ່ງກ່າວບໍ່ພຽງແຕ່ຢູ່ເຮືອນຂອງນາງເທີມ ຫາກໝົດທຸກຫລັງຄາເຮືອນຂອງບ້ານດັ່ງກ່າວ ລ້ວນແຕ່ມີໃຈສັດທາຮັກແພງພະນັກງານທັງລາວແລະຫວຽດນາມທີ່ໄປເພິ່ງພາອາໃສ ບໍ່ວ່າແຕ່ກິນອ້ອຍ, ໝາກກ້ຽງ, ໝາກສີດາ ເມື່ອຍື່ນເງິນໃຫ້ພວກເຂົາກໍ່ປະຕິເສດບໍ່ຍອມຮັບ, ສະຫາຍສົມສະຫວາດ ໄດ້ສະແດງຄວາມຂອບອົກຂອບໃຈຊາວບ້ານແລະສະຫາຍເວົ້າວ່າ ປະຊາຊົນຫວຽດນາມ ມີນິດໃສໃຈຄໍຄືກັນກັບປະຊາຊົນລາວ ຊຶ່ງຄົນລາວມີຄຳເຕືອນສະຕິວ່າ

" ຢູ່ໃຫ້ເຂົາຮັກ ໜີໃຫ້ເຂົາຫອມ " ຫລື " ຢູ່ໃຫ້ທຳຄວາມດີໜີໃຫ້ເຂົາຄິດຮອດ "

* *

*

ເດືອນພະຈິກ ປີ 1968 ວຽກສະຫລຸບດ້ານເສດຖະກິດ ສັງຄົມໃນຮ້ອຍກວ່າໝູ່ບ້ານຂອງ 8 ແຂວງຢູ່ເຂດປົດປ່ອຍລາວ ຖືວ່າສຳເລັດບໍລິບູນ, ແຕ່ກ່ຽວກັບການວາງນະໂຍບາຍໃຫ້ແກ່ເຂດຍາດແຍ່ງ ຫລືເຂດປົດປົກຄອງຊົ່ວຄາວຂອງສັດຕູ ໃຫ້ແທດເໝາະນັ້ນຕ້ອງໄດ້ມີທິດທາງ ແລະນະໂຍບາຍຕື່ມເພື່ອໃຫ້ມັນແທດເໝາະ, ຍ້ອນແນວນັ້ນທາງສູນກາງພັກລາວຈຶ່ງໄດ້ແຕ່ງຕັ້ງພະນັກງານ ຈຳນວນໜຶ່ງລົງໄປເຂດທົ່ງພຽງ ເພື່ອທຳການ

ຄົ້ນຄ້ວາ ໂດຍສະເພາະແມ່ນເຂດທີ່ງພຽງວຽງຈັນ. ຮ່ວມ ຢູ່ໃນຄະນະມີພະນັກງານຫວຽດນາມ 3 ສະຫາຍ.

ພະນັກງານຂອງຝ່າຍລາວຈະເດີນທາງຕາມທີຫລັງ ເພາະຍັງຕ້ອງໄດ້ຝຶກອົບຮົມແລະບຳລຸງດ້ານວິຊາການຈຳນວນຫນຶ່ງ ຂ້າພະເຈົ້າເອງຈະຮ່ວມເດີນທາງກັບເພື່ອນສະຫາຍລາວ, ກ່ອນມື້ອອກເດີນທາງ, ສະຫາຍ ໄກສອນ ພົມວິຫານ ເລຂາທິການໃຫຍ່ພັກປະຊາຊົນປະຕິ ວັດລາວ ໄດ້ເຊື້ອເຊີນໃຫ້ພວກເຮົາຮ່ວມຮັບປະທານອາຫານຢູ່ທີ່ອາຄານ 64 ຖະຫນົນຫາງວຽນຢູ ອັນເປັນເຂດເຮືອນທີ່ລັດຖະບານຫວຽດນາມຈັດໃຫ້ຜູ້ນຳຊັ້ນສູງ ຂອງຝ່າຍລາວມາພັກຜ່ອນ ແລະ ເຮັດວຽກຢູ່ຮ່າໂນ້ຍ, ຮ່ວມໃນພາເຊົ້າຂອງມື້ນັ້ນມີສະຫາຍ ສາລີ ວົງຄຳຊາວ ກຳມະການສູນກາງພັກ ຜູ້ຊີ້ນຳໂດຍກົງກ່ຽວກັບວຽກງານແນວຫລັງສັດຕູຂອງເຂດທົ່ງພຽງວຽງຈັນ ກໍ່ແມ່ນກະໂຕສະຫາຍສາລີເອງທີ່ເປັນຜູ້ປຸງແຕ່ງລາບໃນຄາບເຊົ້າຂອງມື້ນັ້ນ.

ສະຫາຍເລຂາທິການໃຫ່ຍທັງກິນ ທັງດື່ມ ແລະໂອ້ລົມສົນທະນາກັບພວກເຮົາຢ່າງເປັນກັນເອງ, ທຸກຄຳເວົ້າຂອງເພິ່ນລ້ວນແຕ່ເປັນທິດຊີ້ນຳ ໃຫ້ແກ່ການໄປປະຕິບັດຫນ້າທີ່ໂດຍສະເພາະຕ້ອງກຳໃຫ້ແຫນ້ນກ່ຽວກັບດ້ານເສດຖະກິດ - ສັງຄົມຂອງຝ່າຍຂວາທີ່ຢູ່ໃຕ້ ການປົກຄອງຂອງພວກລ່າເມືອງຂື້ນແບບໃຫມ່ມາເປັນເວລາ 10 ກວ່າປີ.

ຕໍ່ກັບຂ້າພະເຈົ້າເອງ, ສະຫາຍໄກສອນໄດ້ແນະນຳເປັນພິເສດ ກ່ຽວກັບການຊ່ວຍ ເຫລືອແນະນຳບົດຮຽນ ເພື່ອໃຫ້ອ້າຍນ້ອງລາວສາມາດເກັບກຳໄດ້ ແລະເຮັດລ້ອນຫນ້າທີ່ ໃນຄາບເຊົ້າພວກເຮົາພາກັນຍົກຈອກດື່ມເຫລົ້າເນັບເມີຍ ແກ້ມກັບລາບດິບ.ແລະລາບ

ສຸກ ພັນກັບຜັກດິບທີ່ຫອມຫວນຊວນກິນ, ຜັກກາດຂີ້ວ ເມື່ອຫຍຳ້ເຂົ້າໄປແລ້ວຈະເປັນຄ້ວນທັງເຂົ້າດັງທັງເຜັດທັງແສບ ຄ້າຍຄືກັບວາຊາບີຂອງຍີ່ປຸ່ນ ເມື່ອກິນແລ້ວມີຄວາມຈົດຈຳໄປຕະ ຫລອດ.

ສະຫາຍສາລີ ວົງຄຳຊາວ ເປັນຄົນບໍ່ມັກປາກຫລາຍ ເພີ່ນມີແຕ່ລະດົມໃຫ້ພວກເຮົາກິນໃຫ້ຫລາຍໆ ເພື່ອມີສຸຂະພາບແຂງແຮງໃນການເດີນທາງໃນມື້ອື່ນ, ອວຍພອນໃຫ້ພວກເຮົາຕ້ອງສາມັກຄີຮັກແພງກັນ ພ້ອມທັງບອກໃຫ້ພວກເຮົາຕ້ອງມີຄວາມເຊື່ອໝັ້ນຕໍ່ປະຊາຊົນ ເພາະປະຊາຊົນວຽງຈັນເປັນຄົນທີ່ດີມີຈິດໃຈປະຕິວັດສູງສົ່ງ.

# ລ່ອງຕາມສາຍນ້ຳງຽບ

ພວກເຮົາເລີ່ມອອກເດີນທາງຈາກນະຄອນຮ່າໂນ້ຍຜ່ານເມືອງແສນ ແຂວງເງອານ ໃນທ່າມກາງຈັກກະພັດອາເມລິກາ ສຸມທຸກກຳລັງທາງອາກາດຍິງຖະຫລົ່ມພາກເຫນືອຫວຽດ ນາມຢ່າງຫນັກເພື່ອຈະເປັນການຕໍ່ລອງການເຈລະຈາທີ່ກຸງປາຣີ ປະເທດຝລັ່ງ, ລົດຂອງພວກເຮົາສ່ວນຫລາຍຈະແລ່ນພຽງແຕ່ກາງຄືນ ຍ່ານໃດທີ່ຂົວຖືກທຳລາຍ ຫລືເປ່ເພຈະມີ ກອງຊ່າງແສງເຂົ້າໄປສ້ອມແປງ ແລະສ້າງຂົວໃຫມ່ຢ່າງທັນການ. ບົນເສັ້ນທາງແຫ່ງສົງຄາມດັ່ງກ່າວ ນອກຈາກລົດຂອງພວກເຮົາແລ້ວ ຍັງມີຂະບວນລົດລຳລຽງ, ຂະບວນແບກຫາບທາງບົກຂອງຄົນງານຫວຽດນາມມຸ້ງຫນ້າໄປທາງແນວຫນ້າຊຽງຂວາງປານກັບມົດຍ້າຍຮັງ.

ຈາກເມືອງແສນເຂົ້າສູ່ເຂດຄັງໄຂ ພວກເຮົາຂຶ້ນລົດຫຸ້ມເກາະ AM ທີ່ປະກອບດ້ວຍປືນກົນຫນັກ ແລະປືນປ້ອງກັນອາກາດສະຍານຢູ່ທາງເຂດດິນລາວ ອາເມລິກາກໍ່ໃຊ້ຍົນທຸກປະເພດຍິງຖິ້ມລະເບີດຢ່າງຮຸນແຮງເຊັ່ນດຽວກັນ ລົດຂອງພວກເຮົາແລ່ນຫມົດຄືນ ແຈ້ງຢູ່ບ່ອນໃດ ແມ່ນພັກຜ່ອນຢູ່ບ່ອນທັ້ນ ສ່ວນຫລາຍຈະພາກັນເຂົ້າໄປພັກຢູ່ໃນດົງ ບ່ອນທີ່ຕົ້ນໄມ້ປົກຫຸ້ມດົກຫນາ.

ທີ່ຄັງໄຂ, ຄະນະພວກເຮົາໄດ້ພົບປະກັບທ່ານ ສິງກະໂປ ສີໂຄດ ຈຸນລະມະນີ, ທ່ານ ພູນສິປະເສີດ ຜູ້ນຳຊັ້ນສູງຂອງພັກ ແລະກອງທະຫານ, ພວກເພິ່ນໄດ້ແນະນຳຕື່ມກ່ຽວກັບສະພາບການ ແລະສິ່ງທີ່ຄວນຈະເຮັດໃນຕໍ່ຫນ້າ. ຝ່າຍພະລາທິການປະຈຳແນວຫນ້າໄດ້

ກຽມອາຫານແຫ້ງ, ຢຸກຢາຫານັງ ພ້ອມທັງສັບປ່ຽນປືນສັ້ນຂະໜາດເບົາຂອງສາທາລະນະລັດ ປະຊາທິປະໄຕ ເຢຍລະມັນ ເພື່ອສະດວກໃນການນຳໃຊ້ເວລາເດີນທາງ.

3 ມື້ຕໍ່ມາ, ພວກເຮົາໄດ້ຂຶ້ນລົດຂົນສົ່ງອາວຸດ ແລະສະບຽງອາຫານໄປໃຫ້ແນວລົບເຂດບໍລິຄຳໄຊ ແລະຜາລະແວກ ເຂດຍອດງື້ມ ໂດຍຜ່ານເສັ້ນທາງທ່າວຽງ - ທ່າໂທມ, ພໍແຕ່ ຂະບວນລົດຮອດທ່າວຽງອາວຸດ ແລະສະບຽງອາຫານທັງໝົດຈຳຕ້ອງຂົນລົງໃສ່ສາງໃນທີ່ນັ້ນ. ສ່ວນຝ່າຍພວກເຮົາແມ່ນມີອ້າຍນ້ອງທະຫານ ນຳ້ງຽບໄປແວ່ພັກຢູ່ບ້ານນາຄາຍ, ຍ້ອນວ່າການເດີນທາງອິດເມື່ອຍຫລາຍ ເຮັດໃຫ້ລຸງປຸ້ຍຫິວໜ້າຄະນະຂອງພວກເຮົາບໍ່ສາມາດຈະສືບຕໍ່ເດີນທາງໄດ້ ລຸງໄດ້ກ່າວກັບພວກເຮົາວ່າ :

" ພວກສະຫາຍຈົ່ງສືບຕໍ່ເດີນທາງ ເພື່ອໃຫ້ທັນກັບແຜນການທີ່ວາງອອກ ສ່ວນລຸງເອງເມື່ອສຸຂະພາບດີຂຶ້ນຈະເດີນທາງໄປຕາມຫລັງ "

ກ່ອນຈະອອກເດີນທາງ ພວກເຮົາໄດ້ປຶກສາຫາລືກ່ຽວກັບເສັ້ນທາງທີ່ຈະໄປ, ປະທານບ້ານນາຄາຍໄດ້ແນະນຳໃຫ້ພວກເຮົາຮູ້ວ່າ ການເດີນທາງຕາມສາຍນຳ້ງຽບ ອ້າຍນ້ອງລາວມັກຈະລ່ອງດ້ວຍແພໄມ້ປ່ອງ ເຖິງຈະມີຕາດຫລາຍຍ່ານ ແຕ່ການຂີ່ແພນັ້ນຈະຮອດໄວກວ່າຍ່າງຢ່າງຊ້າກໍ່ບໍ່ເຖິງເຄິ່ງມື້ກໍ່ຈະຮອດເຂດພູງ. ໄລຍະຜ່ານມາມີແຕ່ອ້າຍນ້ອງຊົນເຜົ່າມົ້ງມັກຈະຕາຍດົກນຳ້ຍ້ອນບໍ່ຮູ້ລອຍ ເພາະສະນັ້ນ ຈຶ່ງມີຄຳສັ່ງມາຈາກທາງເທິງຫ້າມບໍ່ໃຫ້ລ່ອງດ້ວຍແພ, ຜ່ານມາມີ ອ້າຍນ້ອງອາສາສະໝັກຫວຽດນາມ ທີ່ມີຈຳນວນພົນຫລວງຫລາຍນັ້ນຕ້ອງເດີນດ້ວຍຕີນໄປທາງບົກ ຖ້າຫາກຈຳນວນນ້ອຍກໍ່ຈະ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ